# ເຖິງເວລາແລ້ວ: ກຸ່ມຮ່ວມມືກັນຂອງຣັດວໍຊິງຕັນໄດ້ເປີດເຜີຍແຜນການ **10** ປີ ທີ່ຈະທຸບມ້າງຄວາມທຸກຍາກໃນແບບແຜນຜັງສໍາລັບອະນາຄົດທີ່ດີ, ຍຸຕິທັມ

ບ່ອນຕິດຕໍ່ຫາ:


Lindy Henry, Dismantle Poverty in Washington ແລະ Department of Social and Health Services' Economic Services Administration
Penny Thomas, Department of Commerce
Norah West, Department of Social and Health Services
Clare DeLong, Employment Security Department


ແຈນຍູຣີ 14, 2021

OLYMPIA – ຣັດວໍຊິງຕັນໄດ້ຖືກຕິດລໍາດັບໃນຈໍານວນຣັດສຸດຍອດທີ່ຈະອາສັຍຢູ່ໃນປະເທດ, ແລະ ຣັດໄດ້ອອກກົດຫມາຍນະໂຍບາຍນໍາທາງຫລາຍໆຢ່າງເພື່ອຈະອູ້ມຊູຄອບຄົວທີ່ມີຣາຍໄດ້ຕໍ່າກວ່າຫມູ່ເຊັ່ນວ່າເງິນຄ່າແຮງງານຕໍ່າສຸດທີ່ເຂັ້ມແຂງ, ເງິນທຶນວິທະຍາລັຍຂອງຣັດວໍຊິງຕັນ, ເວລາພັກພະຍາບານສໍາລັບຄອບຄົວທີ່ຖືກຈ່າຍເງິນໃຫ້, ເວລາພັກເຈັບປ່ວຍທີ່ຖືກຈ່າຍເງິນໃຫ້ ແລະ ສະວັດດີການປິ່ນປົວຣະຍະຍາວສໍາລັບສາທາຣະນະຊົນເທື່ອທໍາອິດຂອງປະເທດ.

ຄວາມທຸກຍາກ, ເຖິງຢ່າງໃດກໍຕາມ, ໄດ້ເປັນອຸບປະສັກທີ່ຈະຍັງຢູ່ຍາວນານ, ເຖິງແມ່ນວ່າເສດຖະກິດຂອງຣັດວໍຊິງຕັນໄດ້ຕິດລໍາດັບຕະລອດມາຢູ່ໃນຣັດທີ່ດີທີ່ສຸດກໍຕາມ. ບໍ່ກ່ຽວວ່າຈະມີເສດຖະກິດທີ່ເຂັ້ມແຂງມາກ່ອນໂຣກຣະບາດ COVID-19, ເກືອບນຶ່ງໃນສີ່ຂອງພົລເມືອງຂອງຣັດວໍຊິງຕັນ – 1.75 ລ້ານຄົນ, ລວມທັງເດັກນ້ອຍ 500,000 ຄົນ ໄດ້ຕໍ່ສູ້ດີ້ນຣົນເພື່ອຈະໃຫ້ຢູ່ລອດກຸ້ມຕົນເອງ. ໂຣກຣະບາດໄດ້ນໍາທາງພາວະເດືອດຮ້ອນທາງສຸຂະພາບຂອງປະຊາຊົນ ແລະ ພາວະເດືອດຮ້ອນທາງເສດຖະກິດຊຶ່ງເຮັດໃຫ້ເຫັນຄວາມແຕກຕ່າງກັນທີ່ມີຢູ່ຫລາຍໆຢ່າງຢູ່ໃນຊຸມນຸມຊົນຂອງພວກເຮົາ.

ເຈົ້າແຂວງ Jay Inslee's Poverty Reduction Work Group (ກຸ່ມປະຕິບັດງານສໍາລັບການລຸດຜ່ອນຄວາມທຸກຍາກ) ມີແຜນການທີ່ຈະພົບກັນໃນເວລານີ້ຜ່ານເອກສານທີ່ຖືກປ່ອຍອອກມາໃນຫມໍ່ໆມານີ້ A Blueprint for a Just and Equitable Future: The **10-Year Plan to Dismantle Poverty** (ແຜນຜັງສໍາລັບອະນາຄົດອັນຈົບງາມ ແລະ ພຽງພໍ: ແຜນການ 10 ປີເພື່ອຈະທຸບມ້າງຄວາມທຸກຍາກ) ສໍາລັບປະຊາຊົນຣັດວໍຊິງຕັນທຸກໆຄົນ. ເຈົ້າແຂວງ Inslee ໄດ້ເລີ້ມຕົ້ນກຸ່ມປະຕິບັດງານໃນປີ 2017 ເພື່ອຈະອອກແບບແຜນການຍຸດທະສາດສໍາລັບການລຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເມີພາບກັນ. ດ້ວຍການນໍາພາຂອງຫ້ອງການຂອງຣັດຈາກກົມ Department of Commerce, Department of Social and Health Services ແລະ ກົມ Employment Security Department, work group (ກຸ່ມປະຕິບັດງານ) ແມ່ນມີຫລາຍໆກຸ່ມຄົນ, ຜູ້ຖືຜົນປະໂຍດ 45 ຄົນທີ່ມຸ່ງຫມັ້ນ, ທີ່ຖືກດໍາເນີນການໂດຍຄະນະທີມງານນໍາພາທີ່ມີສະມາຊິກ 22 ຄົນຜູ້ທີ່ປະສົບພົບພໍ້ກັບຄວາມຍາກຈົນ. ແຜນການມີ eight strategies and 60 recommendations (ຍຸດທະວິທີແປດຢ່າງແລະຄໍາແນະນໍາ 60 ຢ່າງ) ເພື່ອຈະຊ່ວຍເຫລືອໃຫ້ກໍາຈັດຄວາມທຸກຍາກອອກໄປ.

"ການປ່ຽນແປງໃນຣະບົບກາຍເປັນໄປໄດ້ເມື່ອເວລາພວກເຮົາຮັບຮູ້ວ່າ 'ຣະບົບ' ແມ່ນພວກເຮົາ," Inslee ໄດ້ເວົ້າ. "ບຸກຄົນຜູ້ທີ່ເຮັດວຽກຢູ່ນໍາຣັດຖະບານຂອງຣັດ ແລະ ທ້ອງຖິ່ນ, ບໍ່ຫວັງຜົນກໍາໄຣ, ກິຈການຄ້າ ແລະ ກຸ່ມເພື່ອນມະນຸດດ້ວຍກັນທົ່ວຣັດທຸກໆຄົນມີບົດບາດທີ່ຈະຕ້ອງເຮັດ. ມັນພຽງແຕ່ໃຊ້ຄວາມຍິນດີທີ່ຈະກະທໍາ ... ເພາະະສະນັ້ນແລ້ວມາເລີ້ມຕົ້ນເຮັດວຽກ."

"ສໍາລັບທ່ານຜູ້ທີ່ມີອໍານາດທີ່ຈະຕັດສິນໃຈດຽວນີ້ບໍ່ວ່າຈະຈັດການຫລືບໍ່ ຫລື ຈັດການແນວໃດ, ກະຣຸນາຈື່ໄວ້ວ່າປະຊາຊົນຣັດວໍຊິງຕັນຫລາຍລ້ານຄົນ, ຄືກັນກັບພວກເຮົາ, ຈະດໍາເນີນທີ່ຈະຕໍ່ສູ້ດີ້ນຣົນເພື່ອຈະຮັກສາຫລັງຄາປົກຫົວຂອງພວກເຮົາໄວ້, ຕໍ່ສູ້ເພື່ອຈະລ້ຽງລູກຂອງພວກເຮົາ ແລະ ດໍາຣົງຊີວິດໂດຍປາສຈາກຄວາມສະງົບໃນໃຈວ່າສິ່ງນັ້ນຈະບໍ່ເປັນຫຍັງ," Drayton Jackson ແລະ Juanita Maestas ໄດ້ເວົ້າ, ປະທານຮ່ວມຂອງຄະນະກັມມະການນໍາທາງກຸ່ມລຸດຜ່ອນຄວາມທຸກຍາກ. "ກະຣຸນາຢ່າສູ່ລືມວ່າພວກເຮົາເປັນບຸກຄົນຢູ່ເບື້ອງຫລັງເລກນັ້ນ,ຊີວິດທີ່ຈະໄດ້ຮັບຜົນປະໂຍດຖ້າຫາກວ່າທ່ານເລືອກເອົາທີ່ຈະຈັດການ."

ຢູ່ໃນຣັດນີ້ແລະ ທົ່ວປະເທດ, ພາລະຫນັກຫນ່ວງຂອງ poverty is not equal, (ຄວາມທຸກຍາກແມ່ນບໍ່ສະເມີພາບກັນ) , ສໍາລັບບຸກຄົນທີ່ມີຜິວພັນເປັນສີຕ່າງ, ຜູ້ຍິງ (ໂດຍສະເພາະຜູ້ທີ່ມີລູກອ່ອນ) , ບຸກຄົນຜູ້ທີ່ມີຄວາມເສັຽອົງຄະ, ຊຸມຊົນ LGBTQ, ຄົນອົບພະຍົບ ແລະ ຄົນເຂົ້າເມືອງມາຕັ້ງຖິ່ນຖານຈະຖືກສະທ້ອນເຖິງຢ່າງບໍ່ສົມສ່ວນກັນ.

"ປະວັດສາດສະແດງໃຫ້ເຫັນວ່າເວລາຂອງການຂັດຂວາງທີ່ລຶກຊຶ້ງໄດ້ຖືກຕິດຕາມມາດ້ວຍການປ່ຽນແປງທີ່ຮ້າຍແຮງທາງສັງຄົມ, ປະເພນີວັດທະນະທັມ ແລະ ເສດຖະກິດ," Tim Probst ໄດ້ເວົ້າ, ຜູ້ອໍານວຍການດ້ານເງິນທຶນຢູ່ທີ່ກົມ ESD ແລະ ປະທານຮ່ວມຂອງກຸ່ມປະຕິບັດງານ. "ເວລານີ້ຈະບໍ່ແຕກຕ່າງຫຍັງຫມົດ, ແລະ ການປ່ອຍອອກມາທີ່ທັນຕໍ່ເວລາໃນແຜນການ 10 ປີຈະເວົ້າເຖິງຍຸດທະວິທີ ແລະ ຄໍາແນະນໍາທີ່ພວກເຮົາສາມາດເລີ້ມຕົ້ນທີ່ຈະວາງໃຊ້ໃນດຽວນີ້ເພື່ອຈະກໍ່ສ້າງອະນາຄົດທີ່ດີ ແລະ ເທົ່າທຽມກັນ."

**-- ເພີ້ມເຕີມອີກ --**

DRAFT

“ພວກເຮົາພູມໃຈທີ່ຈະນຳພາຮ່ວມກັນໃນການເຮັດອອກມາ ແລະ ວາງໃຊ້ແຜນການ 10 ປີ,” David Stillman ໄດ້ເວົ້າ, ຮັດຖະມົນຕຣີຊ່ວຍສຳລັບ DSHS’ Economic Services Administration ແລະ ປະທານຮ່ວມຂອງກຸ່ມປະຕິບັດງານ. “ຍຸດທະວິທີ ແລະ ຄຳແນະນຳຢູ່ໃນແຜນການແມ່ນຖືກນຳພາໂດຍຂໍ້ມູນ, ຟັງໃສ່ຫລັກຖານ ແລະ ຖືກແຈ້ງບອກໂດຍຄະນະກັມມະການນຳພາຊຶ່ງປະກອບດ້ວຍບຸກຄົນທີ່ໄດ້ປະສົບພົບພໍ້ນຳຄວາມທຸກຍາກ, ຜູ້ທີ່ຊ່ວຍຊີ້ນຳສິ່ງຮີບດ່ວນຕ້ອງເຮັດກ່ອນຂອງພວກເຮົາ.”

ບໍ່ແມ່ນແຕ່ວ່າຄວາມທຸກຍາກກໍ່ໃຫ້ເກີດມີຜົນອອກມາໃນທາງບໍ່ດີສຳລັບທຸກໆຄົນທີ່ຖືກກະທົບກະເທືອນເຖິງທຸກໆຄົນ, ຢູ່ໃນຣັດວໍຊິງຕັນ, ເສດຖະກິດຈະເຂັ້ມແຂງຫລາຍຂຶ້ນເກືອບ $40 ໂກດຖ້າຫາກວ່າຄວາມທຸກຍາກຖືກລຸດລົງ ແລະ ຄວາມແຕກຕ່າງທາງຜິວພັນໃນຣາຍໄດ້ໄດ້ຖືກກຳຈັດອອກໄປ.

“ການລຸດຜ່ອນຄວາມທຸກຍາກ ແລະ ຄວາມບໍ່ສະເມີພາບບໍ່ແມ່ນພຽງແຕ່ກ່ຽວກັບການກັບຄືນມາທາງເສດຖະກິດ,” Diane Klontz ໄດ້ເວົ້າ, ຜູ້ບໍຣິຫານຊ່ວຍຢູ່ທີ່ກົມ Department of Commerce ແລະ ປະທານຮ່ວມຂອງກຸ່ມປະຕິບັດງານ. “ມັນຍັງແມ່ນອີກຄືກັນກ່ຽວກັບກຽດສັກສີ, ມະນຸດສະທັມ ແລະ ການຂຶ້ນນຳ. ເມື່ອເວລາປະຊາຊົນຣັດວໍຊິງຕັນພຽງພໍນຳຄວາມຕ້ອງການພື້ນຖານຂອງເຂົາເຈົ້າແລ້ວ ແລະ ເຊື່ອວ່າຊີວິດຂອງເຂົາເຈົ້າໄດ້ຖືກໃຫ້ມີຄຸນຄ່າ, ເຂົາເຈົ້າຍັງຄ້າຍຄືຫລາຍກວ່າທີ່ຈະດີ້ນຣົນຕໍ່ສູ້ ແລະ ມີສ່ວນເພື່ອແຜ່ເຕັມທີ່ໃຫ້ຄອບຄົວຂອງເຂົາເຈົ້າ, ໂຮງຮຽນ, ຊຸມນຸມຊົນ ແລະ ວຽກງານ.”

ໄປທີ່ **www.dismantlepovertyinwa.com** ເພື່ອຈະອ່ານແຜນການເຕັມ, ຮຽນຮູ້ເພີ້ມເຕີມກ່ຽວກັບກຸ່ມປະຕິບັດງານສຳລັບການລຸດຜ່ອນຄວາມທຸກຍາກ ແລະ ຄະນະກັມມະການນຳພາ, ແລະ ຈົດຊື່ເພື່ອຈະຕິດແທດນຳວຽກງານ. ຕິດຕາມນຳສັງຄົມສື່ມວນຊົນຢູ່ທີ່ @DismantlePovWA ທາງ Twitter ແລະ @DismantlePovertyinWA ທາງ Facebook. ສຳລັບຄຳຖາມອື່ນໆ, ສົ່ງອີແມລ໌ໄປຫາ PRWG@dshs.wa.gov.

###

DRAFT